# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 8 ພຶສພາ 2022 (05-08-2022)

---

## ເຝົ້າເບິ່ງການສະເດັດກັບມາຂອງພຣະຄຣິດ

*ແມ່ນສຽງຂອງໃຜທີ່ທ່ານຈື່ໄດ້ທັນທີທັນໃດ?*

**ຈຸດສຳຄັນໃນບົດຮຽນ:** ເວລາພຣະເຢຊູສະເດັດກັບມາ ທຸກຄົນຈະຮູ້ຈັກ.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ຂ້າພະເຈົ້າມີຄວາມຊົງຈຳທີ່ດີກ່ຽວກັບຣະດູຮ້ອນຕອນຂ້າພະເຈົ້າເຕີບໃຫຍ່ຂຶ້ນ. ຂ້າພະເຈົ້າຫຼິ້ນຢູ່ນອກບ້ານເກືອບໝົດມື້ກັບເພື່ອນໆຂ້າງບ້ານ. ບ່ອນທີ່ພວກເຮົາຢູ່ເປັນບ່ອນໃກ້ຫ້ວຍແຄມປ່າ. ພວກຂ້າພະເຈົ້າມັກຫາຍຕົວໄປຫຼິ້ນຢູ່ຫ້ວຍ ເປັນເວລາຫຼາຍຊົ່ວໂມງ. ແມ່ຂອງຂ້າພະເຈົ້າມີສຳນຽງພາກໃຕ້. ເມື່ອເຖິງເວລາເຂົ້າແລງ, ເຮົາສາມາດໄດ້ຍິນສຽງແມ່ທຸກຄົນທົ່ວທັງຄຸ້ມອອກມາເອີ້ນລູກຂອງຕົນຢູ່ລະບຽງ. ບໍ່ວ່າຫ້ວຍຈະຢູ່ເລິກໄກພຽງໃດກໍຕາມ, ຂ້າພະເຈົ້າມັກຈະໄດ້ຍິນແມ່ຮ້ອງຊື່ຂ້າພະເຈົ້າ, ດັງກ້ອງມາແຕ່ໄກ. ຂ້າພະເຈົ້າຈຳສຽງອັນດັງຂອງເພິ່ນເອີ້ນ ຂ້າພະເຈົ້າຈຳໄດ້ແມ້ນຢຳບໍ່ມີພາດ.

ວັນນຶ່ງພຣະເຢຊູຄຣິດຈະສະເດັດກັບມາ, ແລະໝາຍສຳຄັນຂອງການກັບມາຂອງພຣະອົງຈະແຈ່ມແຈ້ງ ແລະບໍ່ມີພາດ. ມັນຈະຊັດແຈ້ງດີ! ຂນະນັ້ນພວກເຮົາຈະບໍ່ມີສິ່ງໃດປິດບັງຕໍ່ຄຳເຕືອນລ່ວງໜ້າໃດໆ, ການສະເດັດກັບມາຂອງພຣະຄຣິດຈະເປັນເຫດການທີ່ມີຣິດອຳນາດ, ແລະບໍ່ຄວນພາດ. ຂ້າພະເຈົ້າບໍ່ຄ່ອຍຢາກກັບມາຈາກການຫຼິ້ນ ເວລາແມ່ຂອງຂ້າພະເຈົ້າເອີ້ນ, ແຕ່ເວລາພຣະຄຣິດກັບມາ, ຂ້າພະເຈົ້າຈະຍິນດີຕ້ອນຮັບຊ່ວງເວລານັ້ນເພື່ອ"ເມືອບ້ານ"ແລະຢູ່ນຳພຣະອົງ. ໃນມັດທາຍບົດ 24, ພຣະເຢຊູບອກເຮົາວ່າວັນນັ້ນຈະເປັນຄືແນວໃດ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

**1. <u>ມັດທາຍ 24:23-25</u>.**

*23 ໃນເວລານັ້ນຖ້າຜູ້ໃດຈະບອກພວກທ່ານວ່າ 'ເບິ່ງແມ, ອົງພຣະຄຣິດຢູ່ທີ່ນີ້' ຫລື 'ຢູ່ທີ່ນັ້ນ' ຢ່າຊູ່ເຊື່ອ. 24 ດ້ວຍວ່າຈະມີພຣະ-*
*ຄຣິດທຽມ ແລະໝໍທຳນວາຍຂີ້ໂລບຫຼາຍຄົນເກີດຂຶ້ນ ສະແດງໝາຍສຳຄັນອັນໃຫຍ່ ແລະ ການອັສຈັນຕ່າງໆ ເພື່ອຖ້າເປັນໄດ້*
*ຈະຫຼອກລວງຜູ້ທີ່ພຣະເຈົ້າຊົງເລືອກໄວ້ໃຫ້ຫຼົງ. 25 ນີ້ແຫຼະ, ເຮົາໄດ້ບອກພວກທ່ານໃຫ້ຮູ້ໄວ້ກ່ອນ.*

ທ່ານມັດທາຍໄດ້ໃຫ້ຄຳເຕືອນອັນໃຫຍ່ຫຼວງແກ່ເຮົາວ່າການສະເດັດກັບມາຂອງພຣະເມຊີອາຈະບໍ່ປິດລັບ. ການມາຂອງພຣະອົງຈະບໍ່ປາກົດໃຫ້ເຫັນພຽງກຸ່ມທີ່ຖືກຄັດເລືອກໄວ້ເທົ່ານັ້ນ: ທຸກຄົນຈະໄດ້ເຫັນ. ເພາະສະນັ້ນ ເຮົາບໍ່ຄວນຈິງຈັງກັບຄຳເວົ້າວ່າ, *'ເບິ່ງແມ, ອົງພຣະຄຣິດຢູ່ທີ່ນີ້' ຫລື 'ຢູ່ທີ່ນັ້ນ'.* ພຣະຄຣິດສອນເຮົາໃຫ້ລະວັງຜູ້ທີ່ອ້າງຕົວວ່າເປັນພຣະຄຣິດແລະສະແດງໝາຍສຳຄັນ, ບໍ່ວ່າພວກມັນຈະໂດ່ງດັງປານໃດກໍຕາມ. ພວກເຮົາສ່ວນຫຼາຍຈະສົ່ງສັນຍານເຕືອນພັຍແກ່ຄົນທີ່ຕົກຢູ່ໃນອັນຕະລາຍ, ໂດຍສະເພາະຄົນທີ່ເຮົາຮັກ ແລະເປັນຫ່ວງ. ພຣະຄຣິດເປັນຫ່ວງເຮົາຢ່າງເລິກເຊິ່ງ. ພວກເຮົາໄດ້ເຫັນກ່ອນນີ້ວ່າພຣະຄຣິດຫ່ວງໃຍລູກຂອງພຣະອົງຫຼາຍ, ຊຶ່ງພຣະອົງໄດ້ຫຼຸ້ເວລາຍາກລຳບາກໃຫ້ສັ້ນເຂົ້າເພື່ອເຂົາ (ມັດທາຍ 24:22). ບັດນີ້ເຮົາອ່ານຄວາມເມດຕາຂອງພຣະຄຣິດທີ່ມີຕໍ່ໄພ່ພົນຂອງພຣະອົງຢ່າງເລິກເຊິ່ງ ຊຶ່ງພຣະອົງໄດ້ເຕືອນພັຍແກ່ເຂົາບໍ່ໃຫ້ຖືກຫຼອກລວງຈາກໝໍທຳນວາຍຂີ້ໂລບ. ພວກເຮົາຄວນໄດ້ຍິນສຽງຄວາມຮັກຂອງພຣະເຈົ້າເຕືອນພັຍຕລອດ. ພວກເຮົາຄວນລະວັງບໍ່ຄວນເຊື່ອວຽກງານອັສຈັນເພື່ອພຣະເຈົ້າທັງໝົດຢ່າງອັຕໂນມັດ. ມັນອາດເປັນທັງອັສຈັນແລະຊົ່ວຮ້າຍພ້ອມກັນ. ນີ້ບໍ່ແມ່ນສິ່ງໃໝ່.

ເວລາໂມເຊຢືນຊ້ອງໜ້າຟາຣາໂອຂໍຮ້ອງໃຫ້ປ່ອຍໄພ່ພົນຂອງພຣະເຈົ້າ. ໝໍເວດມົນຂອງຟາຣາໂອໄດ້ຮຽນແບບການອັສຈັນ
ຂອງໂມເຊແລະອາໂຣນຫຼາຍປະການ (ອົພຍົບ 7:10-12, 20-22; 8:5-7). ໄພ່ພົນຂອງພຣະເຈົ້າອາດຈະບໍ່ຖືກຫຼອກລວງ
ໄດ້ງ່າຍໆຖ້າຊາຕານມາໃນຮູບກາຕູນຜີຮ້າຍມີເຂົາແລະຖືເຫຼັກສາມງ່າມ, ແທນທີ່ຈະເປັນແບບນັ້ນ, *ຊາຕານເອງໄດ້ປອມຕົວ
ເປັນເທວະດາຂອງຄວາມສວ່າງ.* [15]*ເຫດສັນນັ້ນຈຶ່ງບໍ່ເປັນການງຶດປະຫຼາດອັນໃດ ທີ່ຜູ້ຮັບໃຊ້ຂອງຊາຕານຈະປອມຕົວເປັນຜູ້
ຮັບໃຊ້ຂອງຄວາມຊອບທັມ ບັ້ນສຸດທ້າຍຂອງຄົນເຫຼົ່ານັ້ນຈະເປັນໄປຕາມກິຈການຂອງເຂົາ (2 ໂກຣິນໂທ 11:14-15).*

*ມີທາງໃດແດ່ທີ່ຈະປ້ອງກັນການຫຼອກລວງຝ່າຍວິນຍານ?*

ພຣະເຢຊູໄດ້ບັນຈຸຄຳຖແລງຊຸກຍູ້ຂໍ້ນຶ່ງໃນນີ້. ພຣະຄຣິດທຽມແລະໝໍທຳນວາຍຂີ້ໂລບຈະບໍ່ສາມາດຫຼອກລວງຜູ້ເຊື່ອໃຫ້ຫຼົງໄດ້. ເຂົາຈະພຍາຍາມ “ພາເຮັດຜິດ, ຖ້າເປັນໄປໄດ້, ແມ່ນແຕ່ຜູ້ທີ່ຊົງເລືອກໄວ້.” ຊາຕານບໍ່ອາດສາມາດຫຼອກລວງຜູ້ເຊື່ອແທ້ໄດ້ຈັກເທື່ອ ກ່ຽວກັບຕົວຈິງຂອງອົງພຣະຜູ້ເປັນເຈົ້າ. ພຣະເຢຊູໄດ້ກ່າວກ່ອນນີ້ໃນ ມັດທາຍ 24:13 *“ແຕ່ຜູ້ໃດອົດທົນຈົນເຖິງທີ່ສຸດ ຜູ້ນັ້ນແຫຼະ, ຈະໄດ້ລອດພົ້ນ.”* ແລະບັດນີ້ພວກເຮົາເຂົ້າໃຈ, ໃນເມື່ອຜູ້ເຊື່ອບໍ່ມີພູມຕ້ານທານຕໍ່ການໂຈມຕີຂອງພຣະຄຣິດທຽມ ພຣະເຈົ້າຈະປ້ອງກັນເຂົາບໍ່ໃຫ້ປະຖິ້ມຄວາມເຊື່ອ. ຄົນທີ່ພຣະເຈົ້າເລືອກໄວ້ອາດຖືກຫຼອກລວງແລະທໍຣະມານ ເຂົາອາດຖືກພຍາຍາມຂ້າໃຫ້ຕາຍ ແຕ່ພວກເຂົາຈະບໍ່ຕົກເປັນເຫຍື່ອຂອງຄົນຫຼອກລວງ. ທ່ານເປໂຕໄດ້ບອກພວກເຮົາໃນ 1 ເປໂຕ 1:5 *“ຊຶ່ງເປັນຜູ້ທີ່ຣິດເດດຂອງພຣະເຈົ້າຊົງເຝົ້າຮັກສາໄວ້ດ້ວຍຄວາມເຊື່ອ ຈົນໄດ້ເຖິງຄວາມພົ້ນຊຶ່ງພ້ອມແລ້ວທີ່ຈະປາກົດໃນເວລາສຸດທ້າຍ.”*

**2. <u>ມັດທາຍ 24:26-29</u>.**

[26]*ດັ່ງນັ້ນຖ້າເຂົາບອກພວກທ່ານວ່າ ‘ເບິ່ງແມ, ທ່ານຜູ້ນັ້ນຢູ່ໃນປ່າ’ ພວກທ່ານຢ່າໄດ້ອອກໄປ ຫລືຖ້າເຂົາບອກວ່າ ‘ເບິ່ງແມ,
ເພິ່ນຢູ່ໃນຫ້ອງ’ ກໍຢ່າຊູ່ເຊື່ອ.* [27]*ດ້ວຍວ່າຟ້າແມບເຫຼື້ອມອອກມາແຕ່ທິດຕາເວັນອອກ ສ່ອງໄປເຖິງທິດຕາເວັນຕົກຢ່າງໃດ
ການທີ່ບຸດມນຸດຈະສະເດັດມາກໍຈະເປັນດັ່ງນັ້ນ.* [28]*ຊາກສົບຢູ່ບ່ອນໃດ ຝູງແຮ້ງກໍຈະຕອມບ່ອນນັ້ນ.* [29]*ພໍໝົດຄວາມທຸກລຳ-
ບາກຂອງວັນເຫຼົ່ານັ້ນແລ້ວ, ດວງອາທິດຈະມືດໄປ ແລະ ດວງຈັນຈະບໍ່ສ່ອງແສງ ດວງດາວທັງປວງຈະຕົກລົງຈາກຟ້າ ແລະ
ບັນດາສິ່ງທີ່ມີອຳນາດໃນທ້ອງຟ້າຈະສະທ້ານຫວັ່ນໄຫວ.*

ພຣະເຢຊູໄດ້ສືບຕໍ່ເຕືອນໃຫ້ຕໍ່ຕ້ານຄຳສອນປອມກ່ຽວກັບບ່ອນຢູ່ຂອງພຣະເມຊີອາ. ເພິ່ນໄດ້ກ່າວໂດຍເນື້ອແທ້ວ່າ, “ຈົ່ງເອົາໃຈໃສ່ສິ່ງຂ້າພະເຈົ້າສອນທ່ານດຽວນີ້ເທົ່ານັ້ນ, ຢ່າເຊື່ອສິ່ງອື່ນໃດທີ່ທ່ານໄດ້ຍິນແລະໄດ້ເຫັນ. ຢ່າຟັງ, ບໍ່ວ່າຂໍ້ຄວາມຫຼືໝາຍສຳຄັນຈະໜ້າສົນໃຈພຽງໃດກໍຕາມ. ຢ່າແລ່ນຕາມຄົນປ່າວຂ່າວລືເຫຼົ່ານີ້.”

ເຫດຮ້າຍທັງຫຼາຍຈະບໍ່ເກີດຂຶ້ນຖ້າຄົນເອົາໃຈໃສ່ຢ່າງຈິງຈັງກັບຄວາມຈິງໃນພຣະຄັມພີຂໍ້ນີ້. ຈະບໍ່ມີການສັງຫານໝູ່ໃນໂຈນສທາວ (Jonestown), ກຸ່ມເດວິດຽນ (Branch Davidians), ຫຼືປະຕູສວັນ. ຄົນເຫຼົ່ານີ້ຕາຍຍ້ອນເຂົາຟັງຄວາມ ຈິມໂຈນ, ເດວິດຄໍແຣສ, ຫຼືມາໂຊຣ໌ແອບໂປໄວທ໌ໃຫ້ຕຳລາ “ເບິ່ງແມ, ທ່ານຜູ້ນັ້ນຢູ່ໃນປ່າ!’ ຫຼື‘ເບິ່ງແມ, ເພິ່ນຢູ່ໃນຫ້ອງ!’” ຖ້າຄົນໃດຄົນນຶ່ງບອກທ່ານວ່າລາວຮູ້ຈັກທາງລັບໄປສູ່ສວັນ, ຈົ່ງປະຕິເສດ ຢ່າຟັງເຂົາ.

ຈະບໍ່ພົບພຣະເມຊີອາໃນບ່ອນທີ່ຄຣູສອນປອມຫຼືພວກນອກສາສນາຊີ້ແນະ. ພວກເຮົາບໍ່ຕ້ອງໄປບ່ອນໃດ; ແທນທີ່ເຮົາຈະໄປ, ພຣະອົງຈະເປັນຜູ້ມາຫາເຮົາ, ຈະສເດັດກັບມາໃນລັກສນະທີ່ແຈ່ມແຈ້ງແລະໜ້າຈົດຈຳ. ພຣະຄຣິດໄດ້ໃຫ້ພາບທີ່ບໍ່ມີຜິດພາດ:*“ດ້ວຍວ່າຟ້າແມບເຫຼື້ອມອອກມາແຕ່ທິດຕາເວັນອອກສ່ອງໄປເຖິງທິດຕາເວັນຕົກຢ່າງໃດການທີ່ບຸດມະນຸດຈະສເດັດມາກໍຈະເປັນດັ່ງນັ້ນ.”* ເມື່ອທ່ານໄດ້ຍິນສຽງຟ້າຮ້ອງຫຼືເຫັນສິ່ງໃດສິ່ງນຶ່ງໃນທ້ອງຟ້າ, ທ່ານບໍ່ຕ້ອງຕົກໃຈວ່າແມ່ນຫຍັງ. ນັ້ນແມ່ນສິ່ງທີ່ພຣະເຢຊູຢາກບອກແຈ້ງ. ພວກເຈົ້າຈະບໍ່ຕື່ນຕົກໃຈວ່າມີຫຍັງເກີດຂຶ້ນເມື່ອພຣະອົງກັບມາ. ມັນຈະບໍ່ມີການຜິດພາດແນ່ນອນ!

ຈາກນັ້ນພຣະເຢຊູໄດ້ເພີ້ມຄຳເວົ້າເບິ່ງຄືວ່າບໍ່ເປັນທາງການ: *ຊາກສົບຢູ່ບ່ອນໃດ ຝູງແຮ້ງກໍຈະຕອມບ່ອນນັ້ນ.* ພວກເຮົາຫຼາຍຄົນໄດ້ຜ່ານສັດຕາຍຕາມທາງ, ແລະ ພວກເຮົາໄດ້ເຫັນຝູງແຮ້ງຖ້າໃຫ້ເຮົາກາຍໄປເພື່ອເຂົາຈະໄດ້ກິນຊາກສົບເປັນອາຫານ. ມັນບໍ່ຊັດເຈນວ່າພຣະເຢຊູໝາຍເຖິງຫຍັງແທ້ຄຳອຸປມານີ້, ແຕ່ບາງທີອາດເປັນເຣື່ອງງ່າຍໆທີ່ຜູ້ຄົນຈະຖືກຊັກຈູງໃຫ້ເຫັນການກັບມາຂອງພຣະຄຣິດຄືດັ່ງແຮ້ງຫາຕອມຊາກສົບ.

ທັມມະຊາດຈະໂຫ່ຮ້ອງໃນການກັບມາຂອງພຣະຄຣິດ. "ດວງອາທິດຈະມືດໄປ, ດວງຈັນຈະບໍ່ສ່ອງແສງ, ດວງດາວຈະຕົກລົງຈາກຟ້າ, ແລະ ຣິດທານຸພາບຂອງສວັນຈະສະທ້ານຫວັ່ນໄຫວ." ການສະເດັດກັບມາຂອງພຣະຄຣິດຈະຕາມມາດ້ວຍການປ່ຽນແປງຮ່າງກາຍດ້ວຍຣິດທານຸພາບ. ໝາຍສຳຄັນໃນທ້ອງຟ້າເຫຼົ່ານີ້ ຈະເປັນສັນຍານແບບທີ່ທຸກຄົນສາມາດເຫັນໄດ້ ແລະຮັບຮູ້ວ່າຍຸກສຸດທ້າຍໃກ້ຈະມາເຖິງ ແລະພຣະຄຣິດກຳລັງສະເດັດກັບມາ. ຖ້າມີພຽງໝາຍສຳຄັນດຽວໃນໝາຍສຳຄັນທັງຫຼາຍທີ່ໃຫ້ມາ, ບາງຄົນອາດພະຍາຍາມອະທິບາຍວ່າເປັນອາຄາດສູນຕາເວັນ ຫຼືດວງດາວຕົກຈາກຟ້າ. ແຕ່ຖ້າໝາຍສຳຄັນທຸກຢ່າງເກີດຂຶ້ນພ້ອມກັນ ຈັ່ງແມ່ນເກີດຂຶ້ນຈາກສິພຣະຫັດພຣະເຈົ້າ. ໃນພຣະຄັມພີເດີມພວກຜູ້ທຳນາຍໄດ້ທຳນາຍໄວ້ລ່ວງໜ້າແລ້ວວ່າ ໝາຍສຳຄັນເຫຼົ່ານີ້ພົວພັນກັບການພິພາກສາສຸດທ້າຍຂອງພຣະເຈົ້າ (ເອຊາຢາ 13:10; 24:23, ເອເຊກຽນ 32:7-8). ຮູບພາບເຫຼົ່ານີ້ເປັນບົດຮຽນທີ່ບໍ່ໄດ້ກ່າວໄວ້ສຳລັບພວກເຮົາ: ພວກເຮົາບໍ່ຕ້ອງລໍຖ້າຈົນກວ່າແຜ່ນດິນໂລກແຕກສະຫຼາຍເພື່ອຕິດຕາມພຣະຄຣິດ.

*ສິ່ງພຣະເຈົ້າສ້າງຊ່ວຍເຮົາແບ່ງປັນຂ່າວປະເສີດໄດ້ຢ່າງໃດ?*

**3. <u>ມັດທາຍ 24:30-31</u>.**

*[30]ເມື່ອນັ້ນ ໝາຍສຳຄັນຂອງບຸດມະນຸດຈະປາກົດຂຶ້ນໃນທ້ອງຟ້າ ມະນຸດທຸກຊາດທົ່ວໂລກຈະຕີເອິກຮ້ອງໄຫ້ ແລ້ວຈະເຫັນບຸດມະນຸດກຳລັງສະເດັດມາເທິງເມກໃນທ້ອງຟ້າດ້ວຍຣິດທານຸພາບແລະສງ່າຣາສີອັນຍິ່ງໃຫຍ່. [31]ພຣະອົງໄດ້ໃຊ້ພວກເທວະດາຂອງຕົນໄປດ້ວຍສຽງແກອັນດັງ ໃຫ້ຮວບຮວມເອົາຄົນທັງປວງທີ່ພຣະອົງຊົງເລືອກໄວ້ແລ້ວຈາກທິດທັງສີ່ ຕັ້ງແຕ່ທີ່ສຸດຟ້າເບື້ອງນີ້ຈົນເຖິງທີ່ສຸດຟ້າເບື້ອງນັ້ນ."*

ເຊັ່ນດຽວກັນກັບໃຈຂອງສາວົກຕ້ອງສັ່ນສະເທືອນເມື່ອພຣະເຢຊູກ່າວເຖິງຄວາມທຸກທໍຣະມານໃນລະຍະນີ້ເຂົາເຈົ້າກໍຕ້ອງຕື່ນເຕັ້ນຄືກັນ ເມື່ອໄດ້ຟັງສງ່າຣາສີຂອງພຣະຄຣິດ ໃນການສເດັດກັບມາຂອງພຣະອົງ. ພຣະເຢຊູຄຣິດຈົບລາຍລະອຽດຂອງຄວາມມືດທີ່ຕ້ອງປະກາດ:"*ເມື່ອນັ້ນ ໝາຍສຳຄັນຂອງບຸດມນຸດຈະປາກົດຂຶ້ນໃນທ້ອງຟ້າ."* ພຣະເຢຊູໄດ້ກ່າວເຖິງໝາຍສຳຄັນທີ່ນ້ອຍກວ່າຫຼາຍອັນ ທີ່ຈະມາກ່ອນການມາຂອງພຣະອົງ, ການສະເດັດກັບມາສ່ວນຕົວຂອງພຣະອົງຈະເປັນໝາຍສຳຄັນສູງສຸດສຳລັບມະນຸດຈະໄດ້ເຫັນ. ພຣະເຢຊູໃຊ້ຂໍ້ອ້າງອີງຈາກພຣະທັມ ດານີເອັນ 7:13 ເພື່ອອະທິບາຍການກັບມາຂອງພຣະອົງໃນເມກວ່າ: *ລະຫວ່າງເກີດນິມິດນີ້ໃນຕອນກາງຄືນ ຂ້າພະເຈົ້າໄດ້ເຫັນຜູ້ນຶ່ງມີຮູບຮ່າງເໝືອນມະນຸດ ເພິ່ນໄດ້ເຂົ້າມາໃກ້ ອ້ອມຮອບດ້ວຍເມກ ແລະໄດ້ເຂົ້າເຝົ້າພຣະຜູ້ຊົງພຣະຊົນຢູ່ເປັນນິດ.* ເມກທີ່ໄດ້ໃຊ້ໃນພຣະຄັມພີເດີມ ເປັນຮູບພາບການເຄື່ອນໄຫວຂອງພຣະເຈົ້າ, ສະນັ້ນ ການປະກາດຂອງພຣະເຢຊູຄຣິດວ່າພຣະອົງຈະມາ "ໃນເມກ" ຢືນຢັນລັກສະນະອັນສູງສົ່ງຂອງພຣະອົງ. ເຖິງແມ່ນວ່າເມກເຫຼົ່ານີ້ເປັນທັມມະຊາດຫຼືເໜືອທັມມະຊາດ, ພຣະເຢຊູຈະໃຊ້ພວກມັນເພື່ອສຳແດງສງ່າຣາສີອັນສູງສົ່ງຂອງພຣະອົງ.

*ການສະເດັດກັບມາຂອງພຣະຄຣິດໃກ້ເຂົ້າມານັ້ນມີຜົນກະທົບແນວໃດຕໍ່ຊີວິດຂອງທ່ານດຽວນີ້?*

ການສະເດັດກັບມາຄັ້ງທີສອງຂອງພຣະຄຣິດຈະມີໝາຍສຳຄັນດ້ວຍ "ຣິດທານຸພາບແລະຣັສມີຍິ່ງໃຫຍ່."ນີ້ຊີ້ໃຫ້ເຫັນຄວາມແຕກຕ່າງຢ່າງໃຫຍ່ຫຼວງຣະຫວ່າງການສະເດັດມາຄັ້ງທີນຶ່ງແລະທີສອງຂອງພຣະອົງ. ພຣະຄຣິດໄດ້ສະເດັດມາໃນສະພາບຕ່ຳ

ຕ້ອຍໃນຮ່າງມະນຸດໃນບ້ານເບັດເລເຮັມ. ໃນເວລານັ້ນ, ມີພຽງບາງຄົນທີ່ສົນໃຈຄວາມສຳຄັນໃນການກຳເນີດຂອງພຣະອົງໃນຄືນຄູ່ນີ້ງທີ່ບໍ່ມີໃຜຮູ້ຈັກໃນບ້ານທີ່ມືດມິດແຫ່ງນີ້ງ. ແຕ່ເວລາພຣະເຢຊູສເດັດກັບມາຄັ້ງທີສອງ, ພຣະອົງຈະປາກົດດ້ວຍຣິດອຳນາດທັງໝົດແລະຣັສມີທີ່ຖືກຕ້ອງຂອງພຣະອົງ. ພຣະເຢຊູຈະຂັບເຄື່ອນເຫຼົ່າເທວະດາ ທີ່ຈະທຳພາຣະກິດຮວບຮວມເອົາຜູ້ເຊື່ອເພື່ອໄປຢູ່ຮ່ວມກັບພຣະອົງໃນສວັນ. ພຣະຄຣິດໄດ້ເລັງເຖິງຜູ້ນຳຂ່າວເຫຼົ່ານີ້ວ່າ "ເທວະດາຂອງພຣະອົງ," ຄວາມຈິງອີກອັນນຶ່ງທີ່ສະແດງໃຫ້ເຮົາເຫັນວ່າພຣະຄຣິດຊົງເປັນພຣະເຈົ້າ. ເທວະດາຂອງພຣະເຈົ້າແມ່ນເທວະດາຂອງພຣະເຢຊູ. ພວກເຮົາບໍ່ຮູ້ເວລາແນ່ນອນວ່າເມື່ອໃດສຽງແກຈະດັງຂຶ້ນເພື່ອປະກາດການສະເດັດກັບມາຂອງພຣະຄຣິດ, ແຕ່ເມື່ອເວລານັ້ນມາເຖິງ, ພວກເຮົາຈະຮູ້ຈັກ. ສຳລັບຜູ້ທີ່ຮູ້ຈັກພຣະຄຣິດ, ສຽງແກດັງຂຶ້ນຈະເປັນສຽງຍິນດີຕ້ອນຮັບ. ພຣະເຢຊູໄດ້ມາແລະພວກເຮົາຈະກັບບ້ານ!

*ທ່ານພົບເຫັນການເລົ້າໂລມໃຈຫຼືສຳນຶກຜິດຫຍັງກ່ຽວກັບຂໍ້ພຣະຄັມພີເຫຼົ່ານີ້?*

## ນຳໃຊ້ໃນຊີວິດ

ເວລາພຣະເຢຊູສະເດັດກັບມາ, ທຸກຄົນຈະຮູ້ຈັກ. ຈົ່ງເລືອກການນຳໃຊ້ຂໍ້ໃດຂໍ້ນຶ່ງຕໍ່ລົງໄປນີ້:

- **ຈົ່ງພິຈາຣະນາ.** ຈົ່ງຖາມຕົວເອງດ້ວຍຄຳຖາມປົກກະຕິວ່າ, "ຖ້າພຣະເຢຊູສະເດັດກັບມາມື້ນີ້, ຂ້ອຍພ້ອມແລ້ວບໍ່?" ຖ້າຄຳຕອບວ່າບໍ່, ຈົ່ງທູນຂໍພຣະເຈົ້າສະແດງໃຫ້ທ່ານເຫັນວ່າມີຫຍັງແດ່ທີ່ທ່ານຕ້ອງປັບຕົວ.
- **ຈົ່ງນະມັສການ.** ຈົ່ງນະມັສການພຣະຜູ້ເປັນເຈົ້າເພາະພຣະອົງຊົງຣິດທານຸພາບແລະສງ່າຣາສີ. ພຣະຄຣິດຈະສະເດັດກັບມາດ້ວຍຣິດທານຸພາບແລະສງ່າຣາສີ. ພຣະນິມິດ 14:7 ເວົ້າວ່າ, *"ເທວະດາຕົນນັ້ນໄດ້ຮ້ອງສຽງດັງຂຶ້ນວ່າ,"ຈົ່ງຢຳເກງພຣະເຈົ້າແລະຖວາຍພຣະກຽດແດ່ພຣະອົງ ເພາະເຖິງເວລາທີ່ພຣະອົງຈະຊົງພິພາກສາແລ້ວ ແລະຈົ່ງນະມັສການພຣະອົງຜູ້ຊົງສ້າງຟ້າສວັນ, ແຜ່ນດິນໂລກ, ນ້ຳທະເລ, ກັບນ້ຳພຸທັງຫຼາຍ"* ຈົ່ງໃຊ້ເວລາສັຣເສີນພຣະລັກສນະທີ່ສົມບູນຂອງພຣະອົງດຽວນີ້ ດ້ວຍການຄາດຫວັງວ່າຈະໄດ້ນະມັສການພຣະອົງຕລອດໄປ.
- **ຈົ່ງແບ່ງປັນ.** ຈົ່ງລະນຶກເຖິງບຸກຄົນທີ່ທ່ານຮູ້ຈັກທີ່ຕ້ອງການຄຳເຕືອນເຖິງການສະເດັດກັບມາຂອງພຣະຄຣິດ. ບາງທີອາດເປັນຜູ້ທີ່ກຳລັງປະເຊີນຄວາມທຸກລຳບາກຢູ່. ອາດຈະເປັນຄົນທີ່ທ່ານໄດ້ອະທິຖານເພື່ອ ຜູ້ຊຶ່ງພຣະຄຣິດຮຽກເອີ້ນຢູ່. ເວລາທ່ານໄປໂລເວົ້າກ່ຽວກັບການສະເດັດກັບມາຂອງພຣະຄຣິດໃນ 1 ເທຊະໂລນິກ 4:18, ເພິ່ນເຕືອນເຮົາວ່າ, *"ເຫດສັນນັ້ນຈົ່ງ ເລົ້າໂລມອອຍໃຈກັນ ດ້ວຍຂໍ້ຄວາມທັງຫຼາຍນີ້ເຖີ້ນ."*

ພວກເຮົາທຸກຄົນລ້ວນແຕ່ມີຄົນເອີ້ນມາແຕ່ໄກ ທ່າມກາງຝູງຊົນ ສຽງນັ້ນເຮົາຈຳໄດ້. ພຣະເຢຊູຈະເຮັດໃຫ້ແນ່ໃຈວ່າພວກເຮົາຈຳພຣະອົງໄດ້ເວລາພຣະອົງສະເດັດກັບມາ. ຈົ່ງຕຽມຕົວໃຫ້ພ້ອມແລະຊ່ອຍຄົນອື່ນຕຽມຕົວໃຫ້ພ້ອມເໝືອນກັນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**